ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1620 /ອຄ.ທຄວ

ນະຄອນຫຼວງວຽງຈັນ, ວັນທີ 28 ສິງຫາ 2013

# ແຈ້ງການ

ເຖິງ:

- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫລວງ
- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ
- ປະຊາຊົນບັນດາເຜົ່າ ຫລື ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຢາກ ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ

ເລື່ອງ: ຂັ້ນຕອນ, ກຳນົດເວລາ, ແບບຟອມ, ຄ່າແບບຟອມ ແລະ ຄ່າທຳນຽມ ສຳລັບການ ແຈ້ງຂຶ້ນທະບຽນວິສາຫະກິດ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ,ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.

ເພື່ອເຮັດໃຫ້ການຂຶ້ນທະບຽນວິສາຫະກິດ ສອດຄ່ອງກັບເນື້ອໃນ ຈິດໃຈຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ມີລະບົບຈະແຈ້ງ, ສະດວກສະບາຍ, ເຂົ້າໃຈງ່າຍສຳລັບປະຊາຊົນ ຫຼື ຜູ້ລົງທຶນ (ພາຍໃນ ແລະ ຕ່າງປະເທດ) ແນໃສ່ສ້າງບັນຍາກາດ ທາງທຸລະກິດທີ່ເອື້ອອຳນວຍຢ່າງເຕັມສ່ວນ ແກ່ການກຳເນີດ ແລະ ພັດທະນາວິສາຫະກິດ ຫຼື ພົນລະເມືອງທີ່ເຮັດທຸລະກິດ ໃຫ້ຂະຫຍາຍຕົວ ທັງທາງດ້ານຈຳນວນ ແລະ ຄຸນນະພາບ ເປັນພື້ນຖານໜັກແໜ້ນແກ່ການພັດທະນາເສດຖະກິດຂອງຊາດ.

ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບຂັ້ນຕອນ, ແບບຟອມເອກະສານແຈ້ງຂຶ້ນທະບຽນວິສາຫະກິດ, ຄ່າທຳນຽມຂຶ້ນທະບຽນວິສາຫະກິດ ແລະ ກຳນົດເວລາສູງສຸດ ສຳລັບ ການພິຈາລະນາເອກະສານໃນແຕ່ລະຂັ້ນຕອນ ເພື່ອຊາບ ແລະ ປະຕິບັດເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ ດັ່ງນີ້:

ກ. ຈຳນວນເອກະສານແຈ້ງຂຶ້ນທະບຽນວິສາຫະກິດ ສຳລັບແຕ່ລະປະເພດ, ຮູບການ ແລະ ຮູບແບບວິສາຫະກິດ ມີດັ່ງນີ້:

- ວິສາຫະກິດສ່ວນບຸກຄົນ ມີ 1 ເອກະສານ (ບໍ່ນັບເອກະສານຄັດຕິດ) ປະກອບດ້ວຍ:
    1. ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດສ່ວນບຸກຄົນ.

- ວິສາຫະກິດຮຸ້ນສ່ວນສາມັນ ມີ 4 ເອກະສານ (ບໍ່ນັບເອກະສານຄັດຕິດ) ປະກອບດ້ວຍ:
    1. ໃບສະເໜີຈອງຊື່ວິສາຫະກິດຂອງວິສາຫະກິດຮຸ້ນສ່ວນສາມັນ;
    2. ສັນຍາສ້າງຕັ້ງວິສາຫະກິດຮຸ້ນສ່ວນສາມັນ;
    3. ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຂອງວິສາຫະກິດຮຸ້ນສ່ວນສາມັນ;
    4. ກົດລະບຽບຂອງວິສາຫະກິດຮຸ້ນສ່ວນສາມັນ.

- ວິສາຫະກິດຮຸ້ນສ່ວນຈຳກັດ ມີ 4 ເອກະສານ (ບໍ່ນັບເອກະສານຄັດຕິດ) ປະກອບດ້ວຍ:
    1. ໃບສະເໜີຈອງຊື່ວິສາຫະກິດຂອງວິສາຫະກິດຮຸ້ນສ່ວນຈຳກັດ;
    2. ສັນຍາສ້າງຕັ້ງວິສາຫະກິດຮຸ້ນສ່ວນຈຳກັດ;
    3. ໃບຄຳຮ້ອງ ແຈ້ງຂຶ້ນທະບຽນວິສາຫະກິດຂອງວິສາຫະກິດຮຸ້ນສ່ວນຈຳກັດ;
    4. ກົດລະບຽບຂອງວິສາຫະກິດຮຸ້ນສ່ວນຈຳກັດ.

- ບໍລິສັດຈຳກັດ ມີ 5 ເອກະສານ (ບໍ່ນັບເອກະສານຄັດຕິດ) ປະກອບດ້ວຍ:
    1. ໃບສະເໜີຈອງຊື່ວິສາຫະກິດຂອງບໍລິສັດຈຳກັດ;
    2. ສັນຍາສ້າງຕັ້ງບໍລິສັດຈຳກັດ,
    3. ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຂອງບໍລິສັດຈຳກັດ;
    4. ກົດລະບຽບຂອງບໍລິສັດຈຳກັດ;
    5. ບົດບັນທຶກກອງປະຊຸມສ້າງຕັ້ງບໍລິສັດ.

- ບໍລິສັດຈຳກັດຜູ້ດຽວ ມີ 3 ເອກະສານ (ບໍ່ນັບເອກະສານຄັດຕິດ) ປະກອບດ້ວຍ:
    1. ໃບສະເໜີຈອງຊື່ວິສາຫະກິດຂອງບໍລິສັດຈຳກັດຜູ້ດຽວ;
    2. ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຂອງບໍລິສັດຈຳກັດຜູ້ດຽວ;
    3. ກົດລະບຽບຂອງບໍລິສັດຈຳກັດຜູ້ດຽວ.

- ບໍລິສັດມະຫາຊົນ ມີ 5 ເອກະສານ (ບໍ່ນັບເອກະສານຄັດຕິດ) ປະກອບດ້ວຍ:
    1. ໃບສະເໜີຈອງຊື່ວິສາຫະກິດຂອງບໍລິສັດມະຫາຊົນ;
    2. ສັນຍາສ້າງຕັ້ງບໍລິສັດມະຫາຊົນ;
    3. ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຂອງບໍລິສັດມະຫາຊົນ;
    4. ກົດລະບຽບຂອງບໍລິສັດມະຫາຊົນ;
    5. ບົດບັນທຶກກອງປະຊຸມສ້າງຕັ້ງບໍລິສັດ.

- ລັດວິສາຫະກິດ: ແບບຟອມຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຂອງລັດວິສາຫະກິດ ແມ່ນໃຫ້ປະຕິບັດຕາມລະບຽບການທີ່ໄດ້ປະກາດໃຊ້ໄວ້ສະເພາະ
- ບໍລິສັດປະສົມ(ຖ້າມີ): ແບບຟອມຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຂອງບໍລິສັດປະສົມ ແມ່ນໃຫ້ປະຕິບັດຕາມລະບຽບການທີ່ໄດ້ປະກາດໃຊ້ໄວ້ສະເພາະ.

ຫ້າມບໍ່ໃຫ້ທວງ, ສ້າງເອກະສານເພີ່ມເຕີມ, ດັດແປງ ຫຼື ຕີຄວາມໝາຍ ເນື້ອໃນແບບຟອມເອກະສານ ເປັນຢ່າງອື່ນ. ຜູ້ທີ່ລະເມີດ ຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 234 ກົດໝາຍວ່າດ້ວຍວິສາຫະກິດ.

ລາຍລະອຽດກ່ຽວກັບຈຳນວນ ແລະ ເນື້ອໃນແບບຟອມເອກະສານແຈ້ງຂຶ້ນທະບຽນວິສາຫະກິດສຳລັບແຕ່ລະປະເພດ, ຮູບການ ແລະ ຮູບແບບວິສາຫະກິດ (ຄັດຕິດມາພ້ອມນີ້).

ຂ. ຄ່າແບບຟອມເອກະສານ ແລະ ຄ່າອັດສຳເນົາເອກະສານ ແຈ້ງຂຶ້ນທະບຽນວິສາຫະກິດ ມີດັ່ງນີ້:
- ໃບສະເໜີຈອງຊື່ວິສາຫະກິດ 10.000 ກີບ/ຊຸດ;
- ໃບສັນຍາສ້າງຕັ້ງ 10.000 ກີບ/ຊຸດ;
- ຄ່າພິມໃບທະບຽນວິສາຫະກິດ ແລະ ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດສຳລັບວິສາຫະກິດສ່ວນບຸກຄົນ 40.000 ກີບ/ຊຸດ;
- ຄ່າພິມໃບທະບຽນວິສາຫະກິດ, ບົດບັນທຶກກອງປະຊຸມສ້າງຕັ້ງບໍລິສັດ, ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ແລະ ກົດລະບຽບວິສາຫະກິດ ຮຸ້ນສ່ວນ ແລະ ບໍລິສັດ ລວມທັງ ລັດວິສາຫະກິດ ແລະ ບໍລິສັດປະສົມ 70.000 ກີບ/ຊຸດ.
- ຄ່າອັດສຳເນົາເອກະສານແຈ້ງຂຶ້ນທະບຽນວິສາຫະກິດ 2.000 ກີບ/ໃບ.

ຄ. ຄ່າທຳນຽມອອກໃບທະບຽນວິສາຫະກິດ

ຄ່າທຳນຽມອອກໃບທະບຽນວິສາຫະກິດ ແມ່ນໃຫ້ປະຕິບັດຕາມລັດຖະດຳລັດ ເລກທີ03/ສປປ, ລົງວັນທີ 19 ພະຈິກ 2008.

ໃຫ້ພາກສ່ວນທີ່ກ່ຽວຂ້ອງກັບການຂຶ້ນທະບຽນວິສາຫະກິດ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ອອກສະໃບດນຳສົ່ງການເກັບຄ່າທຳນຽມດັ່ງກ່າວ ໃຫ້ຂະແໜງການເງິນເປັນຜູ້ເກັບ.

ງ. ກຳນົດເວລາ ໃນການພິຈາລະນາເອກະສານ ມີດັ່ງນີ້:

– ກວດສອບ ແລະ ອອກໃບຮັບຮອງຊື່ວິສາຫະກິດ ພາຍໃນກຳນົດເວລາຊ້າສຸດ ສອງ ວັນລັດຖະການ ນັບແຕ່ວັນຮັບຄຳຮ້ອງຈອງຊື່ວິສາຫະກິດ ເປັນຕົ້ນໄປ;

– ຕອບເປັນລາຍລັກອັກສອນກ່ຽວກັບເຫດຜົນຂອງການປະຕິເສດ ການຂຶ້ນທະບຽນວິສາຫະກິດໂດຍ ມີລາຍເຊັນຂອງເຈົ້າໜ້າທີ່ທະບຽນວິສາຫະກິດ. ກຳນົດເວລາ ໃນການຕອບຊ້າສຸດບໍ່ໃຫ້ເກີນ ສິບວັນລັດຖະການ ນັບແຕ່ວັນຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ (ໃນກໍລະນີປະ

ເພດທຸລະກິດນັ້ນ ບໍ່ນອນຢູ່ໃນບັນຊີປະເພດທຸລະກິດຄວບຄຸມ) ແລະ ສອງວັນລັດຖະການ ນັບແຕ່ວັນ ທີ່ຂະແໜງການກ່ຽວຂ້ອງຕອບບໍ່ເຫັນດີ (ໃນກໍລະນີ ປະເພດທຸລະກິດນັ້ນ ນອນຢູ່ໃນບັນຊີປະເພດທຸລະກິດຄວບຄຸມ);

ການຂຶ້ນ ແລະ ການປ່ຽນແປງເນື້ອໃນທະບຽນວິສາຫະກິດ ໃຫ້ປະຕິບັດຕາມກຳນົດເວລາທີ່ໄດ້ບົ່ງໄວ້ໃນກົດໝາຍວ່າດວ້ຍວິສາຫະກິດ.

~~ການຂຶ້ນທະບຽນວິສາຫະກິດ ໃນແຕ່ລະຄັ້ງໃຫ້ເຮັດເປັນ ສາມ ສະບັບ, ໃນນີ້: ສະບັບ ໜຶ່ງ ມອບໃຫ້~~ ຜູ້ແຈ້ງຂຶ້ນທະບຽນວິສາຫະກິດ, ສະບັບ ສອງ ສົ່ງໃຫ້ພາກສ່ວນສ່ວຍສາອາກອນ ແລະ ສະບັບ ສາມ ເກັບສຳເນົາໄວ້ ໃນຖານຂໍ້ມູນຂອງວິສາຫະກິດ.

ຈ. ຜູ້ທີ່ມີສິດເຊັນໃບທະບຽນວິສາຫະກິດ ປະກອບດ້ວຍ: ຄະນະພະແນກອຸດສາຫະກຳ ແລະ ການຄ້າຜູ້ຊີ້ນຳວຽກງານທະບຽນວິສາຫະກິດ, ຫົວໜ້າ, ຮອງຫົວໜ້າ ແລະ ເຈົ້າໜ້າທີ່ທະບຽນວິສາຫະກິດທຸກຄົນທີ່ສັງກັດໃນພາກສ່ວນຮັບຜິດຊອບວຽກງານຂຶ້ນທະບຽນວິສາຫະກິດ.

ການເຊັນໃບທະບຽນວິສາຫະກິດ ແມ່ນໃຫ້ຈັດເປັນລຳດັບລົງໄປ ໝາຍວ່າ ຖ້າຜູ້ທີ່ມີສິດເຊັນອັນດັບ 1 ບໍ່ຢູ່ (ບໍ່ວ່າດ້ວຍເຫດຜົນໃດກໍຕາມ) ຜູ້ຢູ່ໃນອັນດັບຖັດມາ ມີສິດເຊັນທັນທີ ແລະ ທຸກຄົນ ຕ້ອງຮັບຜິດຊອບຮ່ວມກັນຕໍ່ການເຊັນດັ່ງກ່າວ.

ສ. ໃນກໍລະນີ ມີການລະເມີດແຈ້ງການສະບັບນີ້ ໃຫ້ຂັ້ນເທິງທີ່ມີສິດອຳນາດນຳໃຊ້ມາດຕະການຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ.

ຊ. ແຈ້ງການສະບັບນີ້ປ່ຽນແທນແຈ້ງການ, ສະບັບເລກທີ 1679/ອຄ.ຄພນ, ລົງວັນທີ 31 ສິງຫາ 2011, ເລື່ອງ: ຂັ້ນຕອນ, ກຳນົດເວລາ, ແບບຟອມ, ຄ່າແບບຟອມ ແລະຄ່າທຳນຽມແຈ້ງຂຶ້ນທະບຽນວິສາຫະກິດ.

ວິສາຫະກິດ (ທັງພາຍໃນ ແລະ ຕ່າງປະເທດ) ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ ກ່ອນແຈ້ງການສະບັບນີ້ ບໍ່ຈຳເປັນຕ້ອງມາແຈ້ງຂຶ້ນທະບຽນວິສາຫະກິດໃໝ່ກໍໄດ້.

ຍ. ການນຳໃຊ້ແບບຟອມແຈ້ງຂຶ້ນທະບຽນວິສາຫະກິດຕາມແຈ້ງການສະບັບນີ້ ໃຫ້ເລີ່ມປະຕິບັດນັບແຕ່ວັນທີ 1 ກັນຍາ 2013 ເປັນຕົ້ນໄປ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ